# ເອກະສານລາຍງານການເງິນ ປະຈຳໄຕມາດ 1
# ສິ້ນສຸດ 31 ມີນາ 2022




ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

Souvanny Home Center Public Company

PHONTONGSAVAT RD, PHONTONG VILLAGE, CHANTHABULY DISTRICT, VIENTIANE CAPITAL

OFFICE; (856 21) 415645, FAX; (856 21) 262984, WWW.SOUVANNY.LA

## ສາລະບານ

I. ໃບສະຫຼຸບຊັບສິນບັດ ........ 2-3
II. ໃບລາຍງານຜົນການດໍາເນີນງານ........ 4
III. ໃບລາຍງານສ່ວນປ່ຽນແປງທຶນຂອງຜູ້ຖືຮຸ້ນ........ 5
IV. ໃບລາຍງານ ກະແສເງິນສົດ........ 6-7
1. ຂໍ້ມູນທົ່ວໄປ........ 8
2. ພື້ນຖານໃນການກະກຽມ ........ 8
3. ການຄາດຄະເນ ........ 8
4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ........ 9
5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ........ 9-10
6. ສິນຄ້າໃນສາງ ສຸດທິ........ 10
7. ທີ່ດິນ ແລະ ອຸປະກອນ, ສຸດທິ ........ 11
8. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ ........ 11
9. ເງິນກູ້ຢືມຈາກສະຖາບັນການເງິນ ........ 11-12
10. ສໍາຮອງ ........ 12
ສໍາຮອງຕາມກົດໝາຍ ........ 12
ສໍາຮອງອື່ນໆ ........ 13
11. ເງິນປັນຜົນ ........ 13
12. ລາຍຈ່າຍອາກອນກໍາໄລ........ 13
13. ກໍາໄລຕໍ່ຮຸ້ນ ........ 14
14. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ........ 14
14.1 ລາຍຮັບ ແລະ ລາຍຈ່າຍ........ 14
14.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ........ 15
14.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ ........ 15
15. ລາຍຈ່າຍໃນການຂາຍ ແລະ ບໍລິຫານ ........ 15
16. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສໍາຄັນ ........ 15

| | ບົດ ອະທິບາຍ | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 4 | 10.367.728.769 | 3.285.274.048 |
| ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | 5 | 9.848.996.095 | 12.497.867.185 |
| ເຄື່ອງໃນສາງ, ສຸດທິ | 6 | 307.907.782.538 | 289.175.467.358 |
| ຊັບສິນໝູນວຽນອື່ນໆ | | 7.603.673.369 | 7.159.850.423 |
| ລວມຊັບສິນໝູນວຽນ | | 335.728.180.771 | 312.118.459.014 |
| **ຊັບສິນບໍ່ໝູນວຽນ** | | | |
| ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ | 7 | 692.873.534.452 | 637.484.068.573 |
| ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ | | 58.394.866 | 41.679.842 |
| ຊັບສິນບໍ່ໝູນວຽນອື່ນໆ | | - | - |
| ລວມຊັບສິນບໍ່ໝູນວຽນ | | 692.931.929.318 | 637.525.748.415 |
| **ລວມຊັບສິນ** | | **1.028.660.110.089** | **949.644.207.429** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸດທະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 6 ພຶດສະພາ 2022

ພັນໂນລາ ສຸດທະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 6 ພຶດສະພາ 2022

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ໃບລາຍງານສະຖານະການເງິນ
ສໍາລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2022

| | ບົດ ອະທິບາຍ | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນຕົນເອງ** | | | |
| **ໜີ້ສິນໝູນວຽນ** | | | |
| ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | 9 | 92.259.666.512 | 85.686.567.355 |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ | 8 | 50.235.792.164 | 59.803.233.467 |
| ສ່ວນທີ່ໝູນວຽນ ຂອງເງິນກູ້ໄລຍະຍາວ | 9 | 15.046.827.614 | 13.820.250.486 |
| ໜີ້ຕ້ອງສົ່ງອາກອນກໍາໄລ | | 3.565.339.548 | 4.066.651.565 |
| ເງິນກູ້ຢືມຈາກລູກຄ້າ | | 2.851.445.134 | 2.129.487.607 |
| ໜີ້ສິນໝູນວຽນອື່ນໆ | | 12.500.202.496 | 14.747.214.631 |
| ລວມໜີ້ສິນໝູນວຽນ | | 176.459.273.468 | 180.253.405.110 |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມໄລຍະຍາວ | 9 | 6.750.629.057 | 9.671.632.212 |
| ລວມໜີ້ສິນບໍ່ໝູນວຽນ | | 6.750.629.057 | 9.671.632.212 |
| **ລວມໜີ້ສິນ** | | 183.209.902.525 | 189.925.037.321 |
| **ທຶນຕົນເອງ** | | | |
| ທຶນຈົດທະບຽນ | | | |
| ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ | | | |
| ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ | | 330.000.000.000 | 330.000.000.000 |
| ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ | | | |
| ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ | | 330.000.000.000 | 330.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 24.735.724.722 | 24.735.724.722 |
| ກໍາໄລສະສົມ | | | |
| ເງິນສໍາຮອງຕາມກົດໝາຍ | 10 | 8.440.875.640 | 8.440.875.640 |
| ເງິນສໍາຮອງອື່ນໆ | | 8.190.875.640 | 8.190.875.640 |
| ກໍາໄລຖ້າແບ່ງປັນ | | 199.031.030.784 | 180.915.608.468 |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | 275.051.700.778 | 207.436.085.638 |
| ລວມທຶນຕົນເອງ | | 845.450.207.564 | 759.719.170.108 |
| **ລວມໜີ້ສິນ ແລະ ທຶນຕົນເອງ** | | **1.028.660.110.089** | **949.644.207.429** |
| | | - | - |

ວັດດານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່
ວັນທີ: 6 ພຶດສະພາ 2022

ພົນໂນລາ ສຸຄະບັນດິດ
ຜູ້ອໍານວຍການ ຝ່າຍການເງິນ
ວັນທີ: 6 ພຶດສະພາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

บໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ໃບລາຍງານຜົນການດຳເນີນງານ
ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2022

| | ບົດ ອະທິບາຍ | 31 ມີນາ 2022 ກີບ | 31 ມີນາ 2021 ກີບ |
|---|---|---|---|
| ລາຍໄດ້ຈາກການຂາຍ | | 156.017.933.060 | 121.685.112.078 |
| ລາຍໄດ້ຈາກການບໍລິການ | | - | - |
| ຕົ້ນທຶນໃນການຂາຍ | | (116.946.239.673) | (98.529.374.797) |
| ຕົ້ນທຶນໃນການບໍລິການ | | - | - |
| **ກຳໄລລວມຂັ້ນຕົ້ນ** | | **39.071.693.387** | **23.155.737.281** |
| ລາຍຮັບອື່ນໆ | | 576.691.527 | 438.792.681 |
| ລາຍຈ່າຍໃນການຂາຍ | | (10.582.873.085) | (8.873.766.080) |
| ລາຍຈ່າຍບໍລິຫານ | | (8.149.851.729) | (8.117.755.081) |
| ລາຍຈ່າຍການເງິນ | | (1.432.593.094) | (947.362.772) |
| ກຳໄລຈາກອັດຕາແລກປ່ຽນ ສຸດທິ | | 1.973.782.441 | 74.190.355 |
| **ກຳໄລ ກ່ອນຈ່າຍອາກອນກຳໄລ** | | **21.456.849.447** | **5.729.836.384** |
| ອາກອນກຳໄລ | **12** | (3.341.427.131) | (946.390.694) |
| **ກຳໄລສຸດທິ** | | **18.115.422.316** | **4.783.445.690** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | **13** | **110** | **29** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 6 ພຶດສະພາ 2022

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 6 ພຶດສະພາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

บໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນຂອງຜູ້ຖືຮຸ້ນ
ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2022

| | ບົດ ອະທິບາຍ | ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ | ສ່ວນເພີ່ມ ມູນຄ່າຮຸ້ນ ກີບ | ສຳຮອງເງິນ ຕາມກົດໝາຍ ກີບ | ສຳຮອງເງິນ ອື່ນໆ ກີບ | ກຳໄລສະສົມ ລໍຖ້າແບ່ງປັນ ກີບ | ຜົດດ່ຽງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ | ລວມ ກີບ |
|---|---|---|---|---|---|---|---|---|
| **ຍອດຍົກມາ ວັນທີ 1 ມັງກອນ 2021** | | 330.000.000.000 | 24.735.724.722 | 5.973.926.973 | 5.723.926.973 | 164.542.719.132 | 172.891.823.494 | 703.868.121.294 |
| ສຳຮອງເງິນຕາມກົດໝາຍ | | - | - | - | - | - | - | - |
| ສຳຮອງເງິນອື່ນໆ | | - | - | - | - | - | - | - |
| ກຳໄລສຸດທິ | | - | - | - | - | 4.783.445.690 | - | 4.783.445.690 |
| ຈ່າຍເງິນປັນຜົນ | | - | - | - | - | - | - | - |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | (10.942.090.097) | (10.942.090.097) |
| **ຍອດເຫຼືອໃນວັນທີ 31 ມີນາ 2021** | | 330.000.000.000 | 24.735.724.722 | 5.973.926.973 | 5.723.926.973 | 169.326.164.822 | 161.949.733.397 | 697.709.476.887 |
| **ຍອດຍົກມາ ວັນທີ 1 ມັງກອນ 2022** | | 330.000.000.000 | 24.735.724.722 | 8.440.875.640 | 8.190.875.640 | 180.915.608.468 | 207.436.085.637 | 759.719.170.107 |
| ສຳຮອງເງິນຕາມກົດໝາຍ | | - | - | - | - | - | - | - |
| ສຳຮອງເງິນອື່ນໆ | | - | - | - | - | - | - | - |
| ກຳໄລສຸດທິ | | - | - | - | - | 18.115.422.316 | - | 18.115.422.316 |
| ຈ່າຍເງິນປັນຜົນ | | - | - | - | - | - | - | - |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 67.615.615.141 | 67.615.615.141 |
| **ຍອດເຫຼືອໃນວັນທີ 31 ມີນາ 2022** | | 330.000.000.000 | 24.735.724.722 | 8.440.875.640 | 8.190.875.640 | 199.031.030.784 | 275.051.700.778 | 845.450.207.564 |
| | | - | - | - | - | - | - | - |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸດທະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 6 ພຶດສະພາ 2022

ພົນໄຊລາ ສຸດທະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 6 ພຶດສະພາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານ ກະແສເງິນສົດ**

**ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2022**

| | ບົດ ອະທິບາຍ | 31 ມີນາ 2022 ກີບ | 31 ມີນາ 2021 ກີບ |
|---|---|---|---|
| **ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລສຸດທິກ່ອນອາກອນກຳໄລ | | 21.456.849.447 | 5.729.836.384 |
| ການດັດແກ້ຈາກ: | | | |
| ຄ່າຫຼູ້ຍຫ້ຽນ | 7 | 4.629.134.024 | 4.502.811.060 |
| ຄ່າຕັດຈ່າຍ | | 1.922.467 | 11.338.109 |
| ກຳໄລຈາກການຂາຍທີ່ດິນ, ສິ່ງປຸກສ້າງ ແລະ ອຸປະກອນ | | - | (120.696.692) |
| ຂາດທຶນຈາກອັດຕາແລກປ່ຽນ | | (4.062.210.423) | 501.932.029 |
| ລາຍຈ່າຍດອກເບ້ຍ | | 1.432.593.094 | 947.362.772 |
| ສຳຮອງເຄື່ອງໃນສາງ | | 247.646.303 | (229.650.738) |
| ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | (70.385.408) | 660.445.960 |
| ສຳຮອງໜີ້ຕ້ອງຮັບຈາກການຮັບຄືນສິນຄ້າ | | 1.020.028.069 | 384.653.413,00 |
| ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນ | | 24.655.577.573 | 12.388.032.297 |
| ການປ່ຽນແປງຈາກ ການດຳເນີນງານຂອງຊັບສິນ ແລະ ໜີ້ສິນ | | | |
| - ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | 2.791.578.682 | (1.305.983.812) |
| - ເຄື່ອງໃນສາງ | | 6.294.822.665 | (2.831.391.275) |
| - ຊັບສິນໝູນວຽນອື່ນໆ | | 181.968.985 | 2.741.297.119 |
| - ຊັບສິນບໍ່ໝູນວຽນອື່ນໆ | | - | - |
| - ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | (15.052.045.339) | 3.257.555.577 |
| - ເງິນມັດຈຳຈາກລູກຄ້າ | | 535.834.063 | 230.370.251 |
| - ໜີ້ສິນໝູນວຽນອື່ນໆ | | (3.500.875.960) | (929.661.052) |
| ກະແສເງິນສົດທີ່ເກີດຈາກການດຳເນີນງານ | | 15.906.860.669 | 13.550.219.104 |
| ຈ່າຍດອກເບ້ຍ | | (1.467.679.090) | (914.194.509) |
| ຈ່າຍອາກອນກຳໄລ | | (3.941.260.210) | (697.394.936) |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການດຳເນີນງານ | | 10.497.921.369 | 11.938.629.659 |
| **ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:** | | | |
| ຊື້ຊັບສິນບັດຄົງທີ່ | 7 | (4.063.627.561) | (3.187.529.135) |
| ຊື້ຊອບແວຄອມພິວເຕີ | | (15.123.502) | (6.531.552) |
| ຮັບເງິນຈາກການຂາຍຊັບສິນບັດຄົງທີ່ | | - | 121.423.194 |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ | | (4.078.751.063) | (3.072.637.492) |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ໃບລາຍງານ ກະແສເງິນສົດ
ສໍາລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2022

| | ບົດ ອະທິບາຍ | 31 ມີນາ 2022 ກີບ | 31 ມີນາ 2021 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກໍາການເງິນ:** | | | |
| ຮັບເງິນກູ້ຢືມຈາກທະນາຄານ | | 93.678.301.262 | 36.081.199.170 |
| ການຊໍາລະຄືນຂອງເງິນກູ້ຢືມຈາກທະນາຄານ | | (97.134.214.523) | (43.625.478.577) |
| ຈ່າຍເງິນປັນຜົນ | | - | - |
| ເງິນສົດສຸດທິຈາກກິດຈະກໍາທາງການເງິນ | | (3.455.913.261) | (7.544.279.407) |
| **ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 2.963.257.046 | 1.321.712.760 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ | | 3.285.274.048 | 3.734.536.186 |
| ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 4.119.197.675 | (696.781.636) |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | **10.367.728.769** | **4.359.467.310** |
| **ລາຍການບໍ່ແມ່ນເງິນສົດ** | | | |
| ໜີ້ຕ້ອງສົ່ງອື່ນໆຈາກການຊື້ຊັບສິນຄົງທີ່ | | 257.625.994 | 222.524.290 |
| ໜີ້ຕ້ອງສົ່ງດອກເບ້ຍ | | 35.085.996 | 33.168.263 |

ອຸດສາຫະກໍາ ແລະ ການຄ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່
ວັນທີ: 6 ພຶດສະພາ 2022

ພັນໂນລາ ສຸຄະບັນດິດ
ຜູ້ອໍານວຍການ ຝ່າຍການເງິນ
ວັນທີ: 6 ພຶດສະພາ 2022

## 1 ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍສິນຄ້າ ແລະ ອຸປະກອນສໍາລັບການກໍ່ສ້າງ. ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢູ່ອາໄສ ແລະ ສະໜອງການບໍລິການທີ່ກ່ຽວຂ້ອງ ໃຫ້ກັບທຸລະກິດຂາຍຍ່ອຍ.

ມີສໍານັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະ ຍັງມີສາຂາ 7 ສາຂາຄື: ສາຂາໂພນຕ້ອງ, ສາຂາສີໄຄ, ສາຂາໂຊກໃຫຍ່, ສາຂາປາກຊັນ, ສາຂາປາກເຊ, ສາຂາສະຫວັນນະເຂດ ແລະ ສາຂາທ່າແຂກ.

ເອກະສານລາຍງານການເງິນປະຈໍາໄຕມາດ 1 ສະບັບນີ້ໄດ້ຜ່ານອະນຸມັດ ໂດຍຜູ້ອໍານວຍການ **ໃນວັນທີ 6 ພຶດສະພາ 2022.**

## 2 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສໍາລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສໍາລັບການນໍາ IFRS ມາໃຊ້ພາຍໃນໄລຍະເວລາສີ່ປີ. ຊຶ່ງໃນຂະນະນີ້ຜູ້ບໍລິຫານກໍາລັງກະກຽມແຜນປະຕິບັດການ ສໍາລັບການດໍາເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນໍາໃຊ້ອາດແຕກຕ່າງຢ່າງມີສາລະສໍາຄັນ ຈາກຫຼັກການບັນຊີ IFRS.

## 3. ການຄາດຄະເນ

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກໍານົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈໍານວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈໍານວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສໍາຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສໍາຄັນ.

## 4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---|---|
| ເງິນສົດໃນມື | 512.204.807 | 637.529.904 |
| ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ | 9.855.523.962 | 2.647.744.144 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 10.367.728.769 | 3.285.274.048 |

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງພາຍໃນປະເທດໃນ 4 ສະກຸນເງິນ ໂດລາສະຫະລັດ, ບາດ, ກີບ ແລະ ຢວນ ໃນບັນຊີກະແສລາຍວັນ.

## 5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---|---|
| ໜີ້ຕ້ອງຮັບການຄ້າ | 9.652.849.585 | 10.628.677.359 |
| <u>ຫັກ</u> ໜີ້ສົງໄສຈະເສຍ | (1.442.844.021) | (1.395.937.031) |
| ໜີ້ຕ້ອງຮັບການຄ້າ ສຸດທິ | 8.210.005.564 | 9.232.740.328 |
| | | |
| ເງິນກູ້ຢືມພະນັກງານ | 231.481.418 | 196.184.144 |
| ໜີ້ຕ້ອງຮັບອື່ນໆ (i) | 1.407.509.113 | 3.068.942.713 |
| | 1.638.990.531 | 3.265.126.857 |
| ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ | 9.848.996.095 | 12.497.867.185 |

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ມີນາ 2022 ມີອາຍຸການດັ່ງຕໍ່ນີ້:

| | **31 ມີນາ 2022 ກີບ** | **31 ທັນວາ 2021 ກີບ** |
|---|---|---|
| ບໍ່ຄົບກຳນົດ | 3.916.634.760 | 4.074.416.366 |
| ເກີນກຳນົດ | | |
| 1 - 3 ເດືອນ | 910.951.251 | 1.845.543.058 |
| 3 - 6 ເດືອນ | 158.006.132 | 141.087.731 |
| 6 - 12 ເດືອນ | 178.972.724 | 101.794.992 |
| ເກີນ 12 ເດືອນ | 4.488.284.718 | 4.465.835.212 |
| ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ | 9.652.849.585 | 10.628.677.359 |
| ຫັກ ໜີ້ສົງໄສຈະເສຍ | (1.442.844.021) | (1.395.937.031) |
| ໜີ້ຕ້ອງຮັບການຄ້າ ສຸດທິ | 8.210.005.564 | 9.232.740.328 |

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ 6 ເດືອນ ສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ. ການຕັ້ງໜີ້ສົງໄສຈະເສຍສຳລັບຍອດໜີ້ຕ້ອງຮັບຄ້າງຊຳລະເກີນ 6 ເດືອນ ຫຼັງຈາກຄົບກຳນົດຊຳລະ ແລະ ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງການຊຳລະຂອງບັນຊີໜີ້ຕ້ອງຮັບ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອານາຄົດ. ຜູ້ບໍລິຫານເຊື່ອວ່າຈຳນວນເຫຼົ່ານີ້ ມີແນວໂນ້ມສູງທີ່ຈະເກັບເງິນຄືນໄດ້ພາຍໃນເດືອນຕໍ່ໄປ.

## 6. ສິນຄ້າໃນສາງ ສຸດທິ

| | **31 ມີນາ 2022 ກີບ** | **31 ທັນວາ 2021 ກີບ** |
|---|---|---|
| ສິນຄ້າໃນສາງ | 312.168.397.285 | 292.865.882.718 |
| ຫັກ: ຄ່າເຊື່ອມມູນຄ່າສິນຄ້າເຄື່ອນໄຫວຊ້າ | (4.061.148.112) | (3.500.789.509) |
| ຄ່າເຊື່ອມມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຈະໄດ້ຮັບ | (199.466.680) | (189.625.851) |
| ສິນຄ້າໃນສາງ ສຸດທິ | **307.907.782.538** | **289.175.467.358** |

ໃນໄຕມາດ 1 ສິ້ນສຸດວັນທີ 31 ມີນາ 2022, ຜູ້ບໍລິຫານໄດ້ປະເມີນ ແລະ ທົບທວນຄືນການສຳຮອງເງິນແຮສຳລັບ ເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ, ເງິນແຮສຳລັບເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝໃນອະດີດ ແມ່ນໄດ້ດັດແກ້ໃຫ້ເພີ່ມຂຶ້ນ ເປັນຈຳນວນເງິນ 4.241 ລ້ານກີບ (2021: 3.690 ລ້ານກີບ) ເນື່ອງຈາກເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ສາມາດຂາຍໄດ້ໜ້ອຍລົງ, ຜົນຈາກການປັບຫຼຸດ ດັ່ງກ່າວ ເຮັດໃຫ້ເງິນແຮ ແລະ ຕົ້ນທຶນຂາຍ ຖືກປັບໃຫ້ເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ການວິເຄາະຂ້າງເທິງ.

## 7. ທີ່ດິນ ແລະ ອຸປະກອນ, ສຸດທິ

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---:|---:|
| ຍອດຍົກມາສຸດທິໃນບັນຊີ | 637.484.068.573 | 603.046.157.185 |
| ການເພີ່ມຂຶ້ນ | 4.321.253.555 | 24.281.601.376 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 55.697.346.348 | 28.535.775.601 |
| ຂາຍຊັບສິນ | 0 | (98.807.766) |
| ຄ່າຫຼຸ້ຍຫ້ຽນ | (4.629.134.024) | (18.280.657.823) |
| ຍອດເຫຼືອມູນຄ່າຕາມບັນຊີສຸດທິ | 692.873.534.452 | 637.484.068.573 |

ຍອດເພີ່ມຂຶ້ນໃນຊ່ວງລະຫວ່າງຮອບເວລາລາຍງານ ໄຕມາດ 1 ສິ້ນສຸດວັນທີ 31 ມີນາ 2022. ສ່ວນໃຫຍ່ເຄື່ອງໃຊ້ຫ້ອງການ ແລະ ອາຄານ ຍອດເພີ່ມຂຶ້ນທັງໝົດ 4.321 ລ້ານກີບ ປະກອບມີ ລາຍການເຄື່ອນໄຫວທີ່ເປັນເງິນສົດ (ຊຳລະແລ້ວ) 4.064 ລ້ານກີບ ແລະ ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ (ຍັງບໍ່ໄດ້ຊຳລະ) 257 ລ້ານກີບ.

## 8. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---:|---:|
| ໜີ້ຕ້ອງສົ່ງການຄ້າ– ພາກສ່ວນທີ່ກ່ຽວຂ້ອງ | 11.833.243.834 | 10.943.297.126 |
| ໜີ້ຕ້ອງສົ່ງການຄ້າ– ບຸກຄົນທີສາມ | 36.371.076.575 | 47.745.460.523 |
| ໜີ້ຕ້ອງສົ່ງອື່ນໆ | 2.031.471.755 | 1.114.475.817 |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | **50.235.792.164** | **59.803.233.466** |

## 9. ເງິນກູ້ຢືມຈາກສະຖາບັນການເງິນ

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---:|---:|
| **ໝູນວຽນ** | | |
| ເງິນເບີກເກີນບັນຊີ | 1.595.804.807 | 5.088.905.747 |
| ເງິນກູ້ຢືມໄລຍະສັ້ນ | 90.663.861.705 | 80.597.661.608 |
| ສ່ວນທີ່ໝູນວຽນຂອງເງິນກູ້ຢືມໃນໄລຍະຍາວ | 15.046.827.614 | 13.820.250.486 |
| **ບໍ່ໝູນວຽນ** | | |
| ເງິນກູ້ຢືມໃນໄລຍະຍາວ | 6.750.629.057 | 9.671.632.212 |
| **ລວມເງິນກູ້ຢືມ** | **114.057.123.183** | **109.178.450.053** |

**ລາຍການເຄື່ອນໄຫວເງິນກູ້ຢືມມີດັ່ງນີ້**

| | **31 ມີນາ 2022 ກີບ** | **31 ທັນວາ 2021 ກີບ** |
|---|---:|---:|
| ອັດຕາດອກເບ້ຍຄົງທີ່ | 103.315.164.063 | 104.155.141.145 |
| ອັດຕາດອກເບ້ຍຂຶ້ນລົງ | 10.741.959.120 | 5.023.308.908 |
| **ລວມເງິນກູ້ຢືມ** | **114.057.123.183** | **109.178.450.053** |

ເງິນກູ້ຢືມໄລຍະສັ້ນຈາກ ທະນາຄານ ກຸງສີ ໃນ ສປປ ລາວ ເຊິ່ງມີອັດຕາດອກເບ້ຍຕ່ຳຈຳກັດ ( LRL) ບວກອັດຕາເປີເຊັນເພີ່ມຕໍ່ປີ ຕ້ອງຊຳລະຄືນພາຍໃນຫ້າເດືອນຫຼັງຈາກເບີກເງິນກູ້. ມີຫຼັກຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

ເງິນກູ້ຢືມໄລຍະສັ້ນຈາກ ທະນາຄານ ກະສິກອນ ໃນ ສປປ ລາວ ເຊິ່ງຈຳນວນໃນສັນຍາ 30 ຕື້ກີບ ເຊິ່ງມີອັດຕາດອກເບ້ຍ 6,4% ຕໍ່ປີ, ຊຳລະຄືນພາຍໃນ 150 ມື້ ຫຼັງຈາກເບີກຖອນ ແລະ ດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

ເງິນກູ້ຢືມໄລຍະສັ້ນຈາກ ທະນາຄານ Exim Bank ໃນປະເທດໄທ, ສັນຍາເງິນກູ້ເລີ່ມຕົ້ນໃນວັນທີ 26 ມີນາ 2020 ໃນອັດຕາດອກເບ້ຍຄົງທີ່ 4%. ການຊຳລະຄືນແມ່ນພາຍໃນ ຫ້າ ເດືອນ ຫຼັງຈາກເບີກຖອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

ເງິນກູ້ໄລຍະຍາວຈາກ ທະນາຄານ ກະສິກອນ ໃນ ສ ປປ ລາວ ເຊິ່ງຈຳນວນໃນສັນຍາ 110 ລ້ານບາດ ເຊິ່ງມີອັດຕາດອກເບ້ຍ 6% ຕໍ່ປີ, ເຊິ່ງມີກຳນົດເຖິງເດືອນທັນວາປີ 2022. ເງິນຕົ້ນຊຳລະຄືນໄປເປັນໄຕມາດເລີ່ມຈາກເດືອນມີນາ 2019 ແລະດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

ເງິນກູ້ຢືມໄລຍະຍາວຈາກ ທະນາຄານ ກະສິກອນໄທ ໃນ ສປປ ລາວ ເຊິ່ງຈຳນວນສັນຍາ 50 ລ້ານບາດ ດ້ວຍດອກເບ້ຍ 5% ຕໍ່ປີ, ເຊິ່ງມີກຳນົດໃນເດືອນທັນວາ 2025. ເງິນຕົ້ນຊຳລະຄືນເປັນໄຕມາດ ເລີ່ມແຕ່ເດືອນມິຖຸນາ 2021 ແລະ ດອກເບ້ຍຊຳລະທຸກເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ກູ້ຢືມດັ່ງກ່າວແມ່ນໄດ້ເບີກຖອນໝົດແລ້ວໃນປີ 2021.

## 10. ສຳຮອງ

**ສຳຮອງຕາມກົດໝາຍ**

| | **31 ມີນາ 2022 ກີບ** | **31 ທັນວາ 2021 ກີບ** |
|---|---:|---:|
| ຍອດຍົກມາ | 8.440.875.640 | 5.973.926.973 |
| ການເພີ່ມຂຶ້ນ | - | 2.466.948.667 |
| ຍອດເຫຼືອທ້າຍ | **8.440.875.640** | **8.440.875.640** |

ເງິນສຳຮອງຕາມກົດໝາຍໄດ້ກຳນົດຕາມ ມາດຕາທີ່ 156 ໃນກົດໝາຍວິສາຫະກິດ ຂອງ ສປປ ລາວ. ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງ ຂອງກຳໄລສຸດທິປະຈຳປີ ຖືກຕັ້ງໄວ້ເປັນສຳຮອງຕາມກົດໝາຍຈົນກ່ວາເງິນສຳຮອງດັ່ງກ່າວ ຈະຮອດ 50% ຂອງທຶນຈົດທະບຽນ.

**ສຳຮອງອື່ນໆ.**

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ. ໂດຍເປັນໄປຕາມນະໂຍບາຍຂອງທາງ ບໍລິສັດ ທີ່ໄດ້ຮັບການຈົດທະບຽນກັບ ກະຊວງການເງິນ ສປປ ລາວ ໃນວັນທີ 22 ກັນຍາ 2015. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

## 11. ເງິນປັນຜົນ

ຈາກການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໃນວັນທີ່ 05 ເມສາ 2022, ໄດ້ສະຫຼຸບວ່າ ຈະຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງປີ 2021 ໃນອັດຕາ 50 ກີບ ຕໍ່ຮຸ້ນ (ປີ 2020: 20,38 ກີບ ຕໍ່ ຮຸ້ນ) ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 8.250 ລ້ານກີບ (ປີ 2020: 3.363 ລ້ານກີບ) ເງິນປັນຜົນຖືກຈ່າຍໃຫ້ກັບຜູ້ຖືຮຸ້ນໃນວັນທີ 04 ພຶດສະພາ 2022.

## 12. ລາຍຈ່າຍອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020. ບໍລິສັດຈະຕ້ອງຈ່າຍອາກອນກຳໄລ ເພື່ອໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 20%.

ບໍລິສັດ ບໍ່ໄດ້ຮັບຮູ້ອາກອນລາຍໄດ້, ການຈ່າຍ ຫຼື ຮັບ ໃນອະນາຄົດສຳລັບຜົນແຕກຕ່າງຊົ່ວຄາວ. ອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຂອງໄລຍະ ແລະ ອັດຕາອາກອນທີ່ກ່ຽວຂ້ອງ.

| | **31 ມີນາ 2022 ກີບ** |
|---|---|
| ***ການສົມທຽບລະຫວ່າງອາກອນລາຍໄດ້ ແລະ ກຳໄລທາງບັນຊີ:*** | |
| ກຳໄລທາງບັນຊີກ່ອນອາກອນ | 21.456.849.447 |
| ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການສຳລັບອາກອນ (1) | (4.749.713.792) |
| ອາກອນລາຍໄດ້ | 16.707.135.655 |
| ຄິດໄລ່ອາກອນ ໃນອັດຕາອາກອນ 20% | **3.341.427.131** |

(1) ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການ ສຳລັບອາກອນສ່ວນໃຫຍ່ປະກອບມີ ຂາດທຶນທີ່ບໍ່ໄດ້ຮັບຮູ້ຈາກການປະເມີນຊັບສິນ, ໜີ້ສິນ ໃນສະກຸນເງິນຕາຕ່າງປະເທດໃນມື້ປິດບັນຊີ.

## 13. ກຳໄລຕໍ່ຮຸ້ນ

ໃນວັນທີ່ 31 ມີນາ 2022 ລາຍຮັບຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການແບ່ງປັນກຳໄລສຸດທິຂອງຜູ້ຖືຮຸ້ນຂອງບໍລິສັດ ໂດຍຈຳນວນສະເລ່ຍນ້ຳໜັກຂອງຮຸ້ນສາມັນໃນລະຫວ່າງປີ.

| | **31 ມີນາ 2022 ກີບ** | **31 ມີນາ 2021 ກີບ** |
|---|---|---|
| ກຳໄລສຸດທິສຳລັບໄລຍະທີ່ສາມາດຈ່າຍໃຫ້ຜູ້ຖືຮຸ້ນ (ກີບ) | 18.115.422.162 | 4.783.445.690 |
| ຕົວສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ(ຮຸ້ນ) | 165.000.000 | 165.000.000 |
| ກຳໄລຕໍ່ຮຸ້ນ (ກີບ) | 110 | 29 |

## 14. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງກັບການບໍລິຫານໃນບໍລິສັດ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ ຫລື ໂດຍທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍ ສື່ກາງ, ການຄວບຄຸມ ຫຼື ແມ່ນຄວບຄຸມໂດຍ ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປທີ່ມີ ບໍລິສັດ ລວມທັງ ບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດ ອື່ນໆທີ່ກ່ຽວຂ້ອງ ກິດຈະການຂອງ ບໍລິສັດ. ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ ໂດຍກົງ ຫຼື ທາງອ້ອມ, ມີສິດໃນການລົງຄະແນນສຽງ ຂອງ ບໍລິສັດ ທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ, ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫລົ່ານີ້ຖືເປັນພາກສ່ວນ ທີ່ກ່ຽວຂ້ອງ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນໄຕມາດ 1 ວັນທີ 31 ມີນາ 2022 ທີ່ມີຄວາມສຳຄັນ ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

### 14.1 ລາຍຮັບ ແລະ ລາຍຈ່າຍ

| | **31 ມີນາ 2022 ກີບ** | **31 ມີນາ 2021 ກີບ** |
|---|---|---|
| ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ | 24.177.962.474 | 21.706.665.712 |
| ຄ່າເຊົ່າຈ່າຍ | 2.564.184.908 | 1.526.194.387 |
| | **26.742.147.382** | **23.232.860.099** |

**14.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ**

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---|---|
| ຄ່າເຊົ່າຄ້າງຈ່າຍ | 1.645.353.770 | 2.594.224.397 |
| ໜີ້ຕ້ອງສົ່ງການຄ້າ | 10.882.115.055 | 10.943.297.126 |

**14.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ**

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານແມ່ນດັ່ງຕໍ່ໄປນີ້:

| | 31 ມີນາ 2022 ກີບ | 31 ມີນາ 2021 ກີບ |
|---|---|---|
| ສຳລັບ ໄຕມາດ 1 | 611.023.723 | 520.027.912 |

**15. ລາຍຈ່າຍໃນການຂາຍ ແລະ ບໍລິຫານ**

ບໍລິສັດໄດ້ມີຄ່າໃຊ້ຈ່າຍໃນການຂາຍ ແລະ ຄ່າໃຊ້ຈ່າຍບໍລິຫານເພີ້ມຂຶ້ນ ເນື່ອງຈາກວ່າບໍລິສັດໄດ້ມີການຂະຫຍາຍສາຂາໃໝ່, ເຮັດໃຫ້ຈຳນວນພະນັກງານກໍ່ເພີ່ມຂຶ້ນ ແລະ ຍັງມີຊັບສິນຖາວອນທີ່ເພີ່ມຂຶ້ນຕາມການຂະຫຍາຍສາຂາຈຶ່ງໄດ້ສົ່ງຜົນໃຫ້ມີຄ່າເຊື່ອມລາຄາເພີ່ມຂຶ້ນມາຕາມລຳດັບ.

**16. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສຳຄັນ**

ພັນທະຄ່າເຊົ່າໃນການດຳເນີນງານ, ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້. ຊຶ່ງໄລຍະການໃຫ້ເຊົ່າແມ່ນ 2-3 ປີ, ແລະ ສ່ວນໃຫຍ່ຂອງສັນຍາເຊົ່ານີ້ແມ່ນສາມາດຕໍ່ໄດ້ເມື່ອສັນຍາເກົ່າໝົດ.

| | 31 ມີນາ 2022 ກີບ | 31 ທັນວາ 2021 ກີບ |
|---|---|---|
| ບໍ່ເກີນ 1 ປີ | 10.194.464.979 | 1.250.349.754 |
| 1 - 5 ປີ | 7.708.691.327 | 2.504.125.123 |
| ຍອດເຫຼືອທ້າຍ 31 ມີນາ 2022 | **17.903.156.306** | **3.754.474.877** |